ຄູ່ມື ການປະສົມພັນປາໄນ

ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ

ພະແນກສິ່ງແວດລ້ອມ ແລະ ສັງຄົມ

ໂຄງການ ລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານການປະມົງ

ມີນາ 2013

ມີນາ 2013

ຄຳນຳ

ຍຸດທະສາດໃນການພັດທະນາ ການປະມົງໂດຍອີງໃສ່ກົດໝາຍວ່າດ້ວຍການປະມົງ ແມ່ນຖືເອົາການສົ່ງເສີມການລ້ຽງ ເປັນບູລິມະສິດທີໜຶ່ງ, ສອງແມ່ນການຄຸ້ມຄອງຈັດການ - ນຳໃຊ້, ສາມແມ່ນການອະນຸລັກ, ສີ່ແມ່ນການພັດທະນາຊັບພະຍາກອນສັດນ້ຳໃຫ້ສົມເຫດສົມຜົນ.

ກິດຈະກຳການລ້ຽງປາແມ່ນສາຂາອາຊີບໜຶ່ງທີ່ຕິດພັນກັບວິຖີຊີວິດຂອງຄົນລາວ ດ້ວຍເຫດທີ່ປະຊາຊົນລາວ ຮ້ອຍເປີເຊັນໃນເຂດຊົນບົດແມ່ນອາໄສສັດນ້ຳ ຫຼື ປາ ເປັນອາຫານທາດຊົ້ນຫຼັກໃນການບໍລິໂພກປະຈຳວັນຂອງຄົວເຮືອນ, ການລ້ຽງປາແມ່ນແນ່ໃສ່ຕອບສະໜອງ ແລະ ຄຳປະກັນແຫຼ່ງອາຫານທາດຊົ້ນໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ຫຼື ຊັບພະຍາກອນສັດນ້ຳໃຫ້ຍືນຍົງດ້ວຍການຫຼຸດຜ່ອນ ຫຼື ເພີ່ງພາການຫາປາໃນແຫຼ່ງນ້ຳທຳມະຊາດເປັນຕົ້ນຕໍ ຫັນມາສູ່ການພັດທະນາການລ້ຽງສັດນ້ຳ ແລະ ປາແທນ.

ການຜະລິດລູກປາເປັນປັດໃຈຕົ້ນຕໍທີ່ສຳຄັນ ເພື່ອຮັບປະກັນການຕອບສະໜອງແນວພັນປາເຂົ້າສູ່ລະບົບການລ້ຽງຢູ່ພາຍໃນປະເທດ ຫຼຸດຜ່ອນການນຳເຂົ້າ ກ້າວໄປສູ່ ກຸ້ມຕົນເອງ, ເພີ່ງຕົນເອງໄດ້ທາງດ້ານແນວພັນ, ເຕັກນິກ - ວິຊາການແບບຄົບວົງຈອນ ລວມທັງການຜະລິດແນວພັນ, ການລ້ຽງ, ການຜະລິດອາຫານປາ ແລະ ການປຸ່ງແຕ່ງຜະລິດຕະພັນປາ.

ປັດໃຈຫຼັກຂອງຄວາມຍືນຍົງໃນການພັດທະນາການປະມົງ ຕ້ອງຖ່າຍທອດບົດຮຽນດ້ານວິຊາການລົງສູ່ທ້ອງຖິ່ນໂດຍການເສີມສ້າງຄວາມຮູ້, ຄວາມສາມາດ ບູກຝັງຈັນຍາບັນໃຫ້ພະນັກງານລັດທີ່ເຮັດວຽກຢູ່ທ້ອງຖິ່ນໃຫ້ເປັນຜູ້ບໍລິການຖ່າຍທອດບົດຮຽນ, ຄວາມຮູ້ ແລະ ຄວາມາສາມາດ ໃຫ້ແກ່ຄອບຄົວຜູ້ທຳການຜະລິດ ຢູ່ຂັ້ນຮາກຖານປະຊາຊົນໃຫ້ກາຍເປັນຕົວແບບສະເພາະດ້ານ.
ຄູ່ມືສະບັບນີ້ແມ່ນສະບັບປັບປຸງຈາກສະບັບທີ່ໄດ້ຈັດພິມໃນປີ 2010.

ໜ່ວຍງານປະມົງ
ມີນາ 2013

ການປະສົມພັນປາໄນ

1.ຈຸດດີພື້ນຖານໃນການລ້ຽງປາໄນ

ປາໄນເປັນປານ້ຳຈືດຊະນິດໜຶ່ງເຊິ່ງມີຄຸນລັກຊະນະທີ່ເໝາະສົມແກ່ການລ້ຽງ, ລ້ຽງງ່າຍ, ໃຫຍ່ໄວ, ຫາແນວພັນໄດ້ງ່າຍ, ມີລູກຫຼາຍ,ທົນທານ, ກິນແຊບ, ບໍ່ທຳລາຍກັນເອງ, ນິຍົມລ້ຽງແບບປະສົມກັບປາຊະນິດອື່ນ, ລ້ຽງເປັນປາສວຍງາມກໍ່ໄດ້, ແຕ່ມີຂໍ້ເສຍບາງປະການເພາະເປັນປາທີ່ມັກດຸດດິນ ຫາກິນ**ຢູ່ພື້ນ**ນຳ້ຊຶ່ງເປັນສາຍເຫດພາໃຫ້ຄັນຄູໜອງສະເປັນຜຳງເປັນໂກນຖ້າມີປາໄນຫຼາຍກ່ວາປາຊະນິດອື່ນອາດ ເກີດການເຊາະເຈື່ອນທັບຖົມ ເຮັດໃຫ້ ໜອງສະຕື້ນເຂີນໄວຂຶ້ນ

ລັກກສະນະປາແມ່ທີ່ກຽມພ້ອມປະສົມພັນ

2. ລັກສະນະທາງກາຍຍະພາບ

ຮູບຮ່າງລັກຊະນະພາຍນອກຂອງປາໄນ ເພດຜູ້ ແລະ ເພດແມ່ມີ ລັກສະນະຄ້າຍຄືກັນຫຼາຍ ການສັງເກດລັກສະນະຂອງເພດຕ້ອງອາໄສຄວາມສຳນານ

ປາຜູ້ທີ່ກຽມພ້ອມປະສົມພັນ

2.1 ປາເພດແມ່

- ມີລຳຕົວປ້ອມ ພື້ນທ້ອງສ່ວນລຸ່ມໃຫຍ່ແບນຜິດປົກກະຕິ ແລະ ອ່ອນນີ້ມນວນ
- ເວລາເອົາມືລູບເບົາໆຕາມຕົນໂຕ ແລະ ຄືຫູຈະຮູ້ສຶກໝີ່ນ
- ອະໄວຍະວະເພດເປັນສີຊົມພູອອກແດງໜ້ອຍໜຶ່ງ
- ຖ້າເອົາມືຮີດແຮງສ່ວນທ້ອງຈະເຫັນໄຂ່ໄຫລອອກມາຕາມຊ່ອງອະໄວຍະວະເພດ.

ຮູບຊົງຂອງປາຜູ້ກັບປາແມ່ທີ່ພ້ອມປະສົມພັນ

2.2 ປາເພດຜູ້

- ປາໄນໂຕຜູ້ມີລຳຕົວຮ່ຽວຍາວ
- ເອົາມືລູບເບົ່າໆຕາມລຳຕົນໂຕ, ຄືບໃບວີຫູ ແລະແກ້ມປາຈະຮູ້ສຶກຊາໆ
- ຖ້າຍັງບໍ່ແນ່ໃຈໃຫ້ເອົາມືຄ່ອຍໆບີບສ່ວນທ້ອງລົງມາທາງຫາງຈະສັງເກດເຫັນນ້ຳສີຂາວຂຸ້ນຄ້າຍຄືນຳ້ນົມໄຫຼອອກມາ

ໝາຍເຫດ: *ຫ້າມບີບແຮງນ້ຳເຊື້ອມັນຈະ*ໄຫຼອອກມາ*ໝົດກ່ອນການປະສົມພັນ*

3. ລະດູການປະສົມພັນ

ປາໄນສາມາດອອກໄຂ່ໄດ້ທຸກລະດູ ແຕ່ກໍ່ມີໄລຍະໜຶ່ງທີ່ປາໄນສາມາດອອກໄຂ່ໄດ້ຫຼາຍທີ່ສຸດ ຕັ້ງແຕ່ເດືອນ 1-5 (ມັງກອນ ຫາເດືອນ ພຶດສະພາ)ໂດຍທົ່ວໄປ ປາໄນທີ່ໃຊ້ເຮັດພໍ່ແມ່ພັນຈະມີອາຍຸຕັ້ງແຕ່ 1 ປີຂຶ້ນໄປຂະໜາດຄວາມຍາວ 25 ຊັງຕີແມັດ, ແມ່ພັນປາໄນທີມີຄວມສົມບູນໄດ້ຮັບການດູແລໃຫ້ອາຫານໃຫ້ຖືກວິທີ ໃນ ຮອບປີໜຶ່ງອາດຈະປະສົມພັນໄດ້ເຖິງ 4 ຄັ້ງຕໍ່ປີ

ເດືອນ	ການປະສົມພັນ ແລະ ການອະນຸບານ	
ກຸມພາ	ປະສົມພັນຄັ້ງທີ 1	ປະສົມພັນແລະອະນຸບານລູກປາ
ມີນາ	ບຳລຸງປາພໍ່ແມ່ພັນປາໄນ	
ເມສາ	ປະສົມພັນຄັ້ງທີ 2	ປະສົມພັນແລະອະນຸບານລູກປາ
ພຶດສະພາ	ບຳລຸງປາພໍ່ແມ່ພັນປາໃນ	
ມິຖຸນາ	ປະສົມພັນຄັ້ງທີ 3	ປະສົມພັນແລະອະນຸບານລູກປາ
ກໍລະກົດ	ບຳລຸງປາພໍ່ແມ່ພັນປາໃນ	
ສິງຫາ	ປະສົມພັນຄັ້ງທີ 4	ປະສົມພັນແລະອະນຸບານລູກປາ
ກັນຍາ	ໄລຍະເດືອນກັນຍາ ຫາເດືອນມັງກອນຂອງແຕ່ລະປີ ເປັນຊ່ວງລະດູໜາວອາຫານປາຕາມທຳມະຊາດມີໜ້ອຍ ປາທຸກຊະນິດຢູ່ໃນໄລຍະພັກຕົວ ບໍ່ປະສົມພັນຈຶ່ງເປັນໄລຍະເວລາທີ່ບຳລຸງພໍ່ແມ່ພັນປາໃຫ້ມີຄວາມສົມບູນ ຕຽມໜອງ ຕາກໜອງ ເພື່ອຕຽມເຮັດປະສົມພັນ	
ຕຸລາ		
ພະຈິກ		
ທັນວາ		
ມັງກອນ		

4. ລັກສະນະຂອງໄຂ່ປາໄນ

ໄຂ່ປາໄນມີລັກສະນະກົມ ນ້ອຍ ສີນ້ຳຕານ ມີເມືອກໜຽວ ໄຂ່ຈະຕິດກັບຮາກພືດນ້ຳຕ່າງໆ ຫຼື ຕົ້ນຫ້ຍາທີ່ຢູ່ໃນນ້ຳ ຖ້າບໍ່ມີບ່ອນຕິດໄຂ່ປາຈະຈົມລົງພື້ນໜອງ ໄຂ່ຈະເນົ່າບໍ່ສາມາດເບາະອອກເປັນໂຕປາໄດ້ ໄຂ່ປາໄນຈະຝັກອອກເປັນໂຕພາຍໃນ 2 – 3 ວັນ

5. ການລ້ຽງປາພໍ່ແມ່ພັນ

ພໍ່ແມ່ພັນປາໄນຄວນລ້ຽງໃສ່ໜອງດິນຂະໜາດໃຫຍ່ພໍສົມຄວນໂດຍປ່ອຍໃນອັດຕາປະມານ 400 - 600 ກິໂລ ຕໍ່ໄລ່ (1,600 ຕາແມັດ) ເກືອອາຫານປະມານ 3% ຂອງນ້ຳໜັກໂຕຕໍ່ມື້ໂດຍໃຫ້ອາຫານສຳເລັດຮູບໂປຣຕີນປະມານ 15 -18 % ຫຼື ໃຫ້ອາຫານປະເພດອື່ນໆທີ່ຫາໄດ້ໃນທ້ອງຖິ່ນກໍ່ໄດ້ເຊັ່ນ: ເຂົ້າປາຍຕົ້ມປະສົມກັບຮຳອ່ອນ, ຫອຍ, ຂີ້ກະເດືອນ, ປວກ, ແມງໄມ້ຕ່າງໆ, ເສດຜັກ, ປັບປຸງຄຸນນະພາບນ້ຳໃຫ້ດີ ເຮັດນ້ຳຂຽວຢູ່ສະເໝີ

6. ໜອງອະນຸບານ

ເປັນໜອງທີ່ຝັກໄຂ່ປາທີ່ແມ່ປາອອກໄຂ່ໃນບ່ອນປະສົມພັນ ຂະໜາດຂອງໜອງອີງຕາມສະພາບພື້ນທີ່ຂອງແຕ່ລະຄອບຄົວ ກ່ອນຈະຍ້າຍໄຂ່ໄປຝັກໃນໜອງອະນຸບານ ໜອງດັ່ງກ່າວຕ້ອງໄດ້ກຽມໄວ້ກ່ອນຢ່າງໜ້ອຍ 7ວັນກ່ອນການປະສົມພັນປາໄນ. ຕ້ອງໄດ້ສູບນ້ຳອອກຈັບສັດຕູຂອງລູກປາອອກເຊັ່ນ:ກົບ,ຂຽດ,ປາດຸກ,ປາຄໍ່, ແມງໄມ້ທາງນ້ຳ ຕາກໜອງໃຫ້ແຫ້ງຈາກນັ້ນໃຫ້ໃສ່ຝຸ່ນຄອກໃນອັດຕາປະມານ 250-300 ກິໂລຕໍ່ໄລ່. ເອົານ້ຳເຂົ້າປະມານ 20 ຊຕມ ປະໄວ້ 2 ວັນສັງເກດພໍເຫັນນ້ຳເປັນສີຂຽວກໍ່ເຕີມນ້ຳໃຫ້ໄດ້ລະດັບ 40-50 ຊຕມ ກໍ່ຈະເກີດໄຮນ້ຳເປັນອາຫານທຳມະຊາດລ້ຽງປານ້ອຍໄດ້ທັນທີ

7. ການຄັດເລືອກປາພໍ່ແມ່ພັນ

ການຄັດເລືອກພໍ່ແມ່ພັນປາເປັນສິ່ງທີ່ສຳຄັນຫຼາຍ ຄວນເລືອກພັນປາທີ່ມີຮູບຮ່າງງາມຖືກກັບລັກສະນະ, ແຂງແຮງບໍ່ເປັນພະຍາດເປັນພັນປາທີ່ຈະເລີນເຕີບໂຕໄວເປັນປາຂະໜາດດຽວກັນແມ່ພັນຄວນມີອາຍຸ 8ເດືອນ ຫາ 1ປີ ຂຶ້ນໄປຖ້າໄດ້ພັນປາຈຳນວນນີ້ໄວ້ເປັນພໍ່ແມ່ພັນແລ້ວ ເຖິງແມ່ນຈະລ້ຽງບໍ່ດີເທົ່າທີຄວນ ປາກໍ່ຍັງຈະເລີນເຕີບໂຕໄດ້ ດັ່ງນັ້ນຄວນຄັດເລືອກພັນປາໄວ້ເປັນພໍ່ພັນແມ່ພັນໄວ້ກ່ອນຮອດລະດູປະສົມພັນ. ຄວນລ້ຽງພໍ່ແມ່ພັນດ້ວຍອາຫານທີ່ມີ ໂປຣຕີນສູງເຊັ່ນ: ອາຫານສຳເລັດຮູບປາດຸກ ຫລື ອາຫານປາກິນພືດ ເພື່ອໃຫ້ປາມີສຸຂະພາບທີ່ສົມບູນ ແລະ ຄວນແຍກໜອງພໍ່ ແລະ ແມ່ພັນຄົນລະໜອງ ເພື່ອຫລີກລ້ຽງມັນປະສົມພັນກັນເອງ

ຮາກໄຄ້

ເຊືອກຟາງ

ຮາກຜັກຕົບ

8. ວັດຖຸຕ່າງໆທີ່ນຳໃຊ້ເປັນຮັງໄຂ່ປາໄນ

ປາໄນເປັນປາທີ່ມີໄຂ່ຊະນິດເກາະຕິດກັບຮາກໄມ້ໃບຫຍ້າທີ່ຢູ່ໃນນ້ຳດັ່ງນັ້ນໃນບ່ອນປະສົມພັນຈຶ່ງຕ້ອງໄດ້ສ້າງຮັງໄຂ່ເຊັ່ນ: ຜັກຕົບ, ຍອຍໄຮ, ຮາກຫວອຍຂອງພືດຕ່າງໆເຊັ່ນ: ຜັກຕົບ, ຍອຍໄຮ, ຮາກກ້ຳກຄ້ຳມ້າ, ຫຼື ຈະຜະລິດເອງໂດຍໃຊ້ເຊືອກຟາງ ດັ່ງຢູ່ໃນຮູບ

8.1 ວິທີເຮັດຮັງໄຂ່ດ້ວຍຜັກຕົບ

- ໃຫ້ເລືອກເອົາຜັກຕົບຕົ້ນທີ່ສົມບູນບໍ່ແກ່ເກີນໄປ
- ລ້າງໃຫ້ສະອາດລີໃບແລະຮາກແກ່ອອກ
- ນຳໄປໃສ່ໃຫ້ເຕັມກະຊັງ ຫຼື ອ່າງປະສົມພັນ, ຖ້າເປັນໜອງໃຫ້ໃສ່ຜັກຕົບໃນບໍລິເວນທີ່ມີນ້ຳຕົກປາກທໍ່ ຫຼື ຮ່ອງ ຫຼື ບໍລິເວນແຈໜອງຕ້ອງໃສ່ໃນປະລິມານຫຼາຍສົມຄວນເພື່ອໃຫ້ປາຫາບ່ອນວາງໄຂ້ໃດ້ງ່າຍ, ຖ້າເປັນຮາກໄມ້ອື່ນໆກໍ່ເຊັ່ນດຽວກັນ

1. ກາງມຸ້ງປະສົມພັນ

8.2 ວິທີການເຮັດຮັງໄຂ່ດ້ວຍເຊືອກຟາງ

- ນຳເຊືອກຟາງມາຕັດໃຫ້ໄດ້ຂະໜາດ 30 ຊຕມ, ແລ້ວຈີກໃຫ້ເປັນຍ່ອຍແລບໆມັດເປັນຈຸກ
- ນຳເອົາຍອຍເຊືອກຟາງທີ່ເປັນຈຸກມາມັດເປັນພວງຫ່າງກັນປະມານ 20 ຊມ ໃສ່ໃນຕະແກ່ງຮັງໄຂ່ທີ່ເຮັດຂອບດ້ວຍໄມ້ໄຜ່ໃຫ້ມີຂະໜາດພໍດີກັບກະຊັງ ຫຼື ອ່າງຟັກໄຂ່ດັ່ງທີ່ທ່ານເຫັນໃນຮູບ.

2. ວາງຮັງໄຂ່

9. ອຸປະກອນໃນການປະສົມພັນແບບທຳມະຊາດ

ກ່ອນຈະເຮັດການປະສົມພັນເຮົາຕ້ອງໄດ້ກະກຽມວັດຖຸແລະອຸປະກອນຮັບໃຊ້ໃຫ້ລະອຽດພຽບພ້ອມດັ່ງນີ້:

- ກຽມມຸ້ງປະສົມພັນເຮັດດ້ວຍແຍ່ງຂຽວຂະໜາດ ຍາວ 3 ມ x ກວ້າງ 1.8 ມ x ເລິກ 0.9 ມ, ຈຳນວນ 1 ດາງ
- ກຽມຕະແກ່ງຮັງໄຂ່ທີ່ເຮັດດ້ວຍວັດສະດຸຕ່າງໆດັ່ງກ່າວມາຂ້າງເທິງນັ້ນສຳລັບໃຫ້ໄຂ່ປາໄນຕິດ
- ກຽມຫລັກໄມ້ໄຜ່ ຫລື ໄມ້ອື່ນໆກໍ່ໄດ້ ສຳຫລັບເຮັດຫລັກກາງກະຊັງປະສົມພັນ ຈຳນວນ 8 ອັນ
- ຊາມ, ຄຸ, ກະຕ່ອງຕັກປາ, ດາງກວດ

3. ປ່ອຍປາ ຜູ້ ແລະ ປາແມ່ລົງໃນກະຊັງ

10. ການປະສົມພັນແບບທຳມະຊາດດ້ວຍການປ່ອຍພໍ່ແມ່ພັນໃຫ້ປະສົມພັນກັນເອງ

ອັດຕາການປ່ອຍພໍ່-ແມ່ພັນເພື່ອປະສົມພັນ ປາແມ່ 1ໂຕ/ປາຜູ້ 2 ຫຼື 3 ໂຕ.
ກ່ອນຈະນຳພໍ່-ແມ່ພັນປາໄນ ທີ່ຄັດເລືອກມາປ່ອຍໃຫ້ອອກໄຂ່ໃນບ່ອນປະສົມພັນຕ້ອງເລືອກໂຕແມ່ທີມີໄຂ່ແກ່ເຕັມທີ່ໂດຍເອົາມືບີບທ້ອງປາແມ່ຄ່ອຍໆ ຖ້າເຫັນໄຂ່ໄຫຼອອກມາສະແດງວ່າໄຂ່ແກ່ເຕັມທີແລ້ວ ສ່ວນໂຕຜູ້ຖ້າບີບທ້ອງແລ້ວຈະເຫັນນ້ຳສີຂາວຄືນ້ຳນົມໄຫຼອອກມາຈາກອະໄວຍະວະເພດສະແດງວ່າກຽມພ້ອມປະສົມພັນແລ້ວ

10.1 ການອອກໄຂ່

ປ່ອຍປາພໍ່ແມ່ພັນລົງອ່າງປະສົມພັນ ຫຼື ກະຊັງໃນເວລາຕອນແລງປາຈະໄລ່ປະສົມພັນກັນເອງ ແລະອອກໄຂ່ໃນຕອນຂ້ອນແຈ້ງປະມານເວລາ 4:00 - 6:00 ໂມງ ຕອນເຊົ້າເມື່ອຮອດເວລາ 7:00 ເຊຳາໃຫ້ຈັບປາພໍ່ແມ່ພັນອອກໄປປ່ອຍໃສ່ໜອງຄືນ ສ່ວນໄຂ່ປາຈະເກາະຕິດກັບຮັງໄຂ່ທີ່ຕຽມໄວ້ແລ້ວປະໄຂ່ຟັກຕໍ່ໄປ.

4. ໄຂ່ປາໄນທີ່ຕິດຢູ່ທີ່ຮັງໄຂ່

10.2 ການກະກຽມໜອງອະນຸບານກ່ອນປ່ອຍປານ້ອຍ

ເຖິງແມ່ນເຮົາຈະຕາກໜອງແລ້ວກໍ່ຕາມເວລາເອົານ້ຳເຂົ້າແມງໄມ້ປະເພດມີປີກທີ່ເປັນສັດຕູປາເຊັ່ນ: ແມງຫົວຄວາຍ,ແມງເຂົ້າສານ,ແມງຕັບເຕົ່າ, ແມງດາເປັນຕົ້ນໃນຕອນກາງຄືນຈະບິນເຂຳາມາອາໃສຢູ່ໃນໜອງ, ດັ່ງນັ້ນກ່ອນຈະປ່ອຍປານ້ອຍລົງໜອງອະນຸບານແຕ່ລະຄັ້ງຕ້ອງໄດ້ຂ້າແມງໄມ້ດັ່ງກ່າວນີ້ເສັຍກ່ອນ

10.3 ວິທີຂ້າແມງໄມ້ມີ 2 ວິທີຄື:

ວິທີ1: ໃຊ້ນ້ຳມັນກາຊວນ 1 ລິດ/ໜອງຂະໜາດ 20ມx20ມ, ໃສ່ຕອນທ່ຽງເວລາຟ້າແດດໃນມື້ທີ່ບໍ່ມີລົມພັດເວລາຟ້າແດດແມງໄມ້ຈະຂຶ້ນມາຫັນໃຈປີກຂອງແມງໄມ້ຈະຕິດຄາບນ້ຳມັນແມງໄມ້ກໍ່ຈະຕາຍ ແຕ່ມີຂໍ້ເສຍເພາະ ມີກິ່ນເຫມັນ

ວິທີ2: ໃຊ້ນ້ຳມັນພືດ 1 ລິດປະສົມກັບແฟ້ບຊັກເຄື່ອງ 400 ກຣາມ, ຄົນໃຫ້ເຂົ້າກັນໃສ່ໃນຕອນທ່ຽງເວລາແດດຮ້ອນໆ ສາດໃຫ້ທົ່ວໜອງປະໄວ້ 1ວັນ, ຈຶ່ງນຳປານ້ອຍມາປ່ອຍ. ຂໍ້ດີຂອງການໃຊ້ນ້ຳມັນພືດຄື: ບໍ່ເປັນພິດຕໍ່ລູກປານ້ອຍທັງເປັນການສ້າງອາຫານທຳມະຊາດໃຫ້ແກ່ປາອີກດ້ວຍ.

6. ການກຽມໜອງອະນຸບານ

11. ການຂົນຍ້າຍໄຂ່ປາໄປຟັກ

ເມື່ອປາຢຸດໄຂ່ປະມານ 1-2 ຊົ່ວໂມງຈຶ່ງເລີ້ມຍ້າຍຮັງໄຂ່ໃນກະຊັງຜ້າຂາວຫລືໜອງອະນຸບານ. ໃນເວລາທີ່ຍ້າຍໄຂ່ປາຕ້ອງລະວັງບໍ່ໃຫ້ຖືກແສງແດດຫຼາຍເກີນໄປຄວນໃຊ້ຖົງເປັນພາຫະນະໃນການລຳລຽງຂົນສົ່ງ. ເມື່ອຍ້າຍມາເຖິງໜອງອະນຸບານຕ້ອງແຜ່ກະຈາຍຮັງໄຂ່ປາອອກຈາກກັນບໍ່ໃຫ້ມັນຈົມນ້ຳເລີກຫລາຍໄຂ່ຈະເໜົ່າ

12. ການຟັກໄຂ່

ແມ່ພັນປາໄນນ້ຳໜັກ 1 ກິໂລຈະມີໄຂ່ປະມານ 100.000 - 200.000 ໜ່ວຍ 2 ຟັກອອກເປັນໂຕພາຍໃນ 2–3 ວັນ, ອຸ່ນນະພູມທີເໝາະສົມຕໍ່ການຝັກໄຂ່ປາ 25 - 30 ອົງສາ. ເມື່ອເປັນໂຕແລ້ວ ລູກປາໃນໄລຍະນີ້ຍັງບໍ່ຕ້ອງການອາຫານ ເພາະມີຖົງອາຫານຕິດຢູ່ໃນທ້ອງຂອງລູກປາເອງສາມາດຢູ່ໄດ້2-3 ວັນຫັ ຼງຈາກນັ້ນຈຶ່ງໃຫ້ອາຫານປະເພດ ໄຂ່ແດງທີຕົ້ມສຸກແລ້ວນຳມານ່ຽນໃສ່ຜ້າຂາວບາງປະສົມກັບນ້ຳໃຫ້ລູກປາກິນ.

13. ການສັກຮໍໂມນເລັ່ງການປະສົມພັນປາໄນ

ການສັກຮໍໂມນເລັ່ງການປະສົມພັນສຳລັບປາໄນ ເປັນການປະສົມພັນເຄິ່ງທຽມ ເຄິ່ງທຳມະຊາດ ຄືບໍ່ມີການຮີດນ້ຳເຊື້ອແລະໄຂ່ອອກມາປະສົມພາຍນອກພຽງແຕ່ ເລັ່ງຮໍໂມນ ໃຫ້ປາອອກໄຂ່ເທົ່ານັ້ນໃນການສັກຮໍໂມນ ສຳຫັ ຼບແມ່ພັນແຕ່ລະຄັ້ງ ຈະໃຊ້ອັດຕາ ທີ່ແຕກຕ່າງກັນເຊິ່ງຂຶ້ນກັບປັດໃຈຫຼາຍຢ່າງທັງຄວາມ

ຢາຊູບປີເຝັກ

ຢາໂມຕິລ່ຽມ

ນ້ຳກັ່ນ

ໂຄກບົດຢາ

ເຂັມສັກຢາ

ຊິງຊັ່ງ

ອຸດົມສົມບູນ ຂອງແມ່ພັນປາ

13.1 ອຸປະກອນທີ່ໃຊ້ໃນການສັກຮໍໂມນ

- ຮໍໂມນສັງເຄາະຄືຢາຊູບປີເຝັກ(Suprefact)
- ຢາໂມຕິລ່ຽມ
- ນ້ຳກັ່ນ
- ເຂັມສັກຢາ
- ຊິງຊັ່ງ
- ຄົກບົດຢາ

13.2 ການຄຳນວນຮໍໂມນມີຢູ່ 2 ຂັ້ນຕອນຄື:

➢ **ຂັ້ນຕອນທີ1 ເອີ້ນว่าການເຈືອจาง**

- ວິທີການເຈືອจาง: ດູດເອົານ້ຳຢາຊູບເປີເຝັກ(Suprefact) 1 ຊີຊີ ປະສົມກັບນ້ຳກັ່ນ 9 ຊີຊີ ລວມເປັນ 10 ຊີຊີໃສ່ກວດເກັບຮັກສາໄວ້ໃນຕູ້ເຢັນ (ຊ່ອງລຸ່ມຊ່ອງໃສ່ຜັກ)

➢ **ຖ້າເຮົາຕ້ອງການສັກປາແມ່ 1 ກິໂລ**

- ບົດຢາໂມຕິລຽມ 1 ເມັດໃຫ້ລະອຽດ
- ດູດເອົານ້ຳຢາຊູບເປີເຝັກທີ່ເຈືອจางไว้ນັ້ນ 0.1 ຊີຊີ ປະສົມກັບນ້ຳກັ່ນ 0,9 ຊີຊີ ຄົນໃຫ້ເຂົ້າກັນກັບຢາໂມຕິລຽມສາມາດນຳໄປສັກປາແມ່ພັນໄດ້1ກິໂລ

ໝາຍເຫດ: ຖ້າຕ້ອງການສັກປາຫຼາຍກິໂລກໍ່ສາມາດຄູນຂຶ້ນຕາມນ້ຳໜັກຂອງປາແມ່ພັນ

14. ການສັກຢາຮໍໂມນ

ການສັກຮໍໂມນໃຫ້ປາພໍ່ແມ່ພັນຄວນສັກບໍລິເວນກ້ານຊີ້ນໃຕ້ຄີຫັ້ງຂອງປານັບແຕ່ເກັດເບື້ອງເທິງລົງມາປະມານ 3 – 4 ເກັດ, ໂດຍໃຊ້ເຂັມແທງເຂົ້າກ່ອງເກັດຢູ່ໃນມຸມ 45 ອົງສາແທງເລິກປະມານ 1 ຊຕມ, ຫັ້ງຈາກສັກແລ້ວ ຕ້ອງນຳປາພໍ່ແມ່ພັນໄປປ່ອຍລົງນຳກັນໃນອ່າງ ຫຼື ກະຊັງທັນທີ

15. ການຕຽມລະບົບການຝັກໄຂ່

- ນຳເອົາຮັງໄຂ່ທີ່ມີໄຂ່ຕິດແລ້ວ ຍ້າຍໄປຝັກໄວ້ໃນໜອງອະນຸບານ ຫຼື ອ່າງທີ່ກຽມໄວ້
- ຖ້າມີເງື່ອນໄຂພຽງພໍຄວນມີການໃຫ້ອາກາດ ແລະປ່ຽນຖ່າຍນ້ຳຕະຫລອດໃນເວລາຝັກໄຂ່.
- ປະມານ 2-3 ວັນ ໄຂ່ຈະຝັກອອກເປັນໂຕປາ
- ນຳເອົາຮັງໄຂ່ອອກຈາກອ່າງ ຫຼື ໜອງອະນຸບານເມື່ອເຫັນວ່າລູກປາແຕກອອກເປັນໂຕແລ້ວ
- ເມື່ອລູກປາອາຍຸ 2-3 ວັນນຳໄປອະນຸບານຕໍ່ໄປ

16. ການອະນຸບານລູກປາໄນ

ອັດຕາການປ່ອຍລູກປາ ລູກປາທີ່ມີອາຍຸ 2-3 ວັນ, ທີ່ຈະປ່ອຍລົງໜອງອະນຸບານຄວນປ່ອຍໃນອັດຕາ ປະມານ 200 - 300 ໂຕ/ຕາແມັດ ຄວນປ່ອຍລູກປາລົງໜອງອະນຸບານໃນເວລາອາກາດເຢັນ (ຕອນເຊົ້າໆດີທີ່ສຸດ)

17. ການເພີ້ມອາຫານທຳມະຊາດໃນໜອງອະນຸບານ

ຕ້ອງໃສ່ຝຸ່ນຄອກທີ່ຕາກແຫ້ງລົງໃນໜອງອະນຸບານ ແລະຄວນເຮັດເປັນ 2 ໄລຍະ, ໄລຍະທຳອິດຕ້ອງໃສ່ໃນ ເວລາຕາກໜອງກ່ອນເອົານ້ຳເຂົ້າ ປະມານ 250-300 ກິໂລ/ໄລ່. ໄລຍະທີ2 ຕ້ອງໃສ່ຝຸ່ນຄອກຫັຼງຈາກ ລູກປາ ຢູ່ໃນໜອງ ອະຍຸບານແລ້ວໃນອັດຕາເຄິ່ງງໜຶ່ງຂອງຈຳນວນໃສ່ໃນຄັ້ງທຳອິດ.

18. ການໃຫ້ອາຫານລູກປານ້ອຍອະນຸບານ

ລູກປາຂະໜາດເກີນ 3 **ຊັງຕີແມັດ** ອາຫານທີ່ຈະເກືອລູກປາຄວນເປັນ ຮຳ, ເຂົ້າປ່າຍປົ່ນ, ອາຫານເຫຼົ່ານີ້ເຮັດໃຫ້ເປັນຜົງໂຮຍ ໄປຕາມຜືວນ້ຳຂ້າງໜອງໃນຕອນເຊົ້າ ແລະ ແລງພໍລູກປາມີຂະໜາດ 4-5 ຊັງຕີແມັດ ກໍ່ສາມາດຈຳໜ່າຍໄດ້

19. ການຈຳໜ່າຍປານ້ອຍ

ເມື່ອລູກປາລ້ຽງອະນຸບານມີຄວາມຍາວ 4-5 ຊຕມ ກໍ່ສາມາດຈຳໜ່າຍໄດ້, ກ່ອນການຂົນສົ່ງລູກປາ ຕ້ອງງົດ ການເກືອອາຫານກ່ອນ 1 ຄາບ ແລະ ຕ້ອງຈັບຂຶ້ນພັກຜ່ອນໃນເວລາຕອນເຊຳຳ ຫລື ຕອນຄຳ່ເວລາອາກາດເຢັນ ເພື່ອປ່ອຍໃຫ້ປາໄດ້ພັກຜ່ອນຢ່າງໜ້ອຍ 2 ຊົ່ວໂມງ ຈຶ່ງທຳການບັນຈຸເຂຳາຖົງຢາງໃນອັດຕາ 200-300ໂຕ/ຖົງ ແລະ ອັດດ້ວຍອົກຊີແຊນ

ຄຳແນະນຳ: ນຳ້ໃນຖົງຢາງທີ່ບັນຈຸລູກປາຈະບໍ່ໃຫ້ເກີນ1/3 ຂອງຂະໜາດຖົງຢາງກໍ່ພຽງພໍແລ້ວ ໃສ່ເກືອລະລາຍ ນ້ຳປະມານ 1 ບ່ວງກາເຟເພື່ອໃຫ້ປາສົດຊື່ນ ພ້ອມທັງເປັນການຂ້າເຊື້ອໂຣກໃຫ້ປາຕື່ມອີກ